ກະຊວງອຸດສາຫະກຳ ແລະ ການຄ້າ
ກົມການຄ້າພາຍໃນ
ເລກທີ: 1024
ວັນທີ: 3-7-17

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

---

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເລກທີ 898/ຫສນຍ.ກລຂ.

ນະຄອນຫຼວງວຽງຈັນ, ວັນທີ 22.6.2017

ເລກທີ 1503
ວັນທີ 22/6/17

# ແຈ້ງການ

**ຮຽນ:** ທ່ານລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ທີ່ນັບຖື.

**ເລື່ອງ:** ມະຕິກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ VIII ວ່າດ້ວຍ ການຮັບຮອງກ່ຽວກັບ ການຄຸ້ມຄອງລາຄາສິນຄ້າ, ຄ່າບໍລິການ ແລະ ມາດຕະການແກ້ໄຂ ເພື່ອຫຼຸດຜ່ອນຜົນກະທົບຕໍ່ການຜະລິດ ແລະ ການດຳລົງຊີວິດ ຂອງປະຊາຊົນ.

- ອີງຕາມມະຕິກອງປະຊຸມສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ VIII ສະບັບເລກທີ 017/ສພຊ, ລົງວັນທີ 02 ມິຖຸນາ 2017.
- ອີງຕາມຕາມຊີ້ນຳ ຂອງທ່ານນາຍົກລັດຖະມົນຕີຄັ້ງວັນທີ 12 ມິຖຸນາ 2017.

ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ຂໍຖືເປັນກຽດແຈ້ງການຊີ້ນຳຂອງທ່ານນາຍົກລັດຖະມົນຕີ ມາຍັງທ່ານຊາບດັ່ງນີ້ : " ເນື່ອງຈາກວ່າບັນດານິຕິກຳ ແລະ ມາດຕະການຕ່າງໆ ກ່ຽວກັບວຽກງານການຄຸ້ມຄອງລາຄາສິນຄ້າ, ຄ່າບໍລິການ ທີ່ກຳນົດຜ່ານມາ ຍັງບໍ່ທັນຄົບຖ້ວນ, ຮັດກຸມ, ການກຳນົດມາດຕະການ ຈັດຕັ້ງປະຕິບັດ ຍັງບໍ່ທັນມີປະສິດທິພາບສູງ, ລາຄາສິນຄ້າ ສະບຽງອາຫານບາງປະເພດ ຍັງມີການເໜັງຕີງຕາມລະດູການ ແລະ ມີລາຄາແພງກວ່າປະເທດໃກ້ຄຽງ, ການວາງນະໂຍບາຍສົ່ງເສີມ ໃນການດັດສົມລາຄາສິນຄ້າທີ່ຈຳເປັນຍັງບໍ່ທັນພຽງພໍ, ຊຶ່ງສົ່ງຜົນກະທົບຕໍ່ການຜະລິດ ແລະ ການດຳລົງຊີວິດ. ສະນັ້ນ, ຈຶ່ງໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການສົມທົບກັບບັນດາກະຊວງ-ອົງການ ແລະ ທ້ອງຖິ່ນ ສ້າງແຜນງານ ແລະ ໂຄງການ ຈັດຕັ້ງປະຕິບັດບາງບັນຫາຕົ້ນຕໍດັ່ງນີ້:

1/- ໃຫ້ຄົ້ນຄວ້າຍົກລະດັບດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການຂຶ້ນເປັນກົດໝາຍ ແລະ ອອກນິຕິກຳເພີ່ມເຕີມ ເພື່ອຄຸ້ມຄອງ, ກວດກາການນຳເຂົ້າ ແລະ ການຈຳໜ່າຍສິນຄ້າປະເພດສະບຽງອາຫານໃຫ້ມີຄວາມຮັດກຸມ.

2/- ໃຫ້ຊຸກຍູ້ສົ່ງເສີມ ການຊື້ກິກ-ຂາຍປາຍໃຫ້ເປັນຮູບປະທຳ ຫຼຸດຜ່ອນການຊື້-ຂາຍຜ່ານຂອດລະຫວ່າງກາງທີ່ບໍ່ຈຳເປັນ ເພື່ອເຮັດໃຫ້ລາຄາສິນຄ້ານຳເຂົ້າຖືກລົງ ແລະ ລາຄາສິນຄ້າສົ່ງອອກເພີ່ມຂຶ້ນ.

3/- ໃຫ້ຄົ້ນຄວ້າອອກມາດຕະການຫຼຸດຜ່ອນຕົ້ນທຶນການຜະລິດ ແລະ ສຶກສາລະອຽດ ຕໍ່ໂຄງປະກອບລາຄາແຕ່ລະປະເພດສິນຄ້າ ເປັນຕົ້ນ ສິນຄ້າສະບຽງອາຫານ, ສິນຄ້າທີ່ເປັນທ່າແຮງຂອງປະເທດ ເພື່ອຍູ້ແຮງ ແລະ ເຮັດໃຫ້ການຜະລິດສິນຄ້າດັ່ງກ່າວ ຂະຫຍາຍຕົວໄວ, ສາມາດແຂ່ງຂັນໄດ້ເປັນຕົ້ນ: ສິນຄ້າກະສິກຳສະອາດ, ປອດສານພິດ, ເປັນມິດຕໍ່ສິ່ງແວດລ້ອມ ແລະ ການຜະລິດ ທີ່ເປັນເອກະລັກ ແລະ ເປັນມູນເຊື້ອຂອງແຕ່ລະທ້ອງຖິ່ນ.

4/- ໃຫ້ເອົາໃຈໃສ່ເພີ່ມທະວີການກວດກາຄຸນນະພາບສິນຄ້ານຳເຂົ້າ ປະເພດສະບຽງອາຫານ ເຊັ່ນ: ຊີ້ນ, ເຄື່ອງໃນສັດ, ປາ, ໄຂ່, ຊີ້ນສ່ວນສັດປີກ, ອາຫານທະເລ, ອາຫານເສີມສຳເລັດຮູບ ທີ່ມີສານເຄມີປົນເປື້ອນເກີນຄ່າມາດຕະຖານ, ເສບຄຸນ ທີ່ຕ້ອງຫ້າມ, ຢາປົວພະຍາດ, ເຄື່ອງສຳອາງ ແລະ ອຸປະກອນການແພດ ເພື່ອເປົ້າໝາຍທາງການຄ້າ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ບໍ່ໄດ້ຜ່ານການກວດກາຄຸນນະພາບຈາກພາກສ່ວນທີ່ກ່ຽວຂ້ອງ.

5/- ໃຫ້ປະຕິບັດມາດຕະການຢ່າງເຂັ້ມງວດຕໍ່ຜູ້ນຳເຂົ້າ ແລະ ຜູ້ຄ້າຂາຍບໍ່ຖືກຕ້ອງ, ຄ້າຂາຍເຖື່ອນ, ຄ້າຂາຍນອກລະບົບ, ຄ້າຂາຍສິນຄ້າ ທີ່ບໍ່ມີສະຫຼາກ, ສິນຄ້າປອມ, ສິນຄ້າເສຍຄຸນ ແລະ ຜູ້ສວຍໂອກາດຂຶ້ນລາຄາສິນຄ້າສະບຽງອາຫານ ແລະ ຢາປົວພະຍາດທີ່ກະທົບໄວຕໍ່ຊີວິດການເປັນຢູ່ຂອງປະຊາຊົນ.

6/- ໃຫ້ເອົາໃຈໃສ່ຢ່າງເຂັ້ມງວດ ຕໍ່ວຽກງານການຄຸ້ມຄອງ ແລະ ກວດກາສິນຄ້າ ທີ່ຜະລິດຢູ່ພາຍໃນປະເທດ ເປັນຕົ້ນສິນຄ້າສະບຽງອາຫານ ແລະ ສິນຄ້າໃຊ້ສອຍປະຈຳວັນ ໃຫ້ຮັບປະກັນທາງດ້ານຄຸນນະພາບ ແລະ ຄວາມປອດໄພຕໍ່ຜູ້ບໍລິໂພກ.

7/- ໃຫ້ຈັດແບ່ງຄວາມຮັບຜິດຊອບ ກ່ຽວກັບການຄຸ້ມຄອງລາຄາສິນຄ້າ ແລະ ຄ່າບໍລິການ ແລະ ປັບປຸງກົນໄກການປະສານງານລະຫວ່າງຂະແໜງການຕ່າງໆທີ່ກ່ຽວຂ້ອງ ແຕ່ຂັ້ນສູນກາງ ຮອດຂັ້ນທ້ອງຖິ່ນໃຫ້ລະອຽດ, ຈະແຈ້ງ ແລະ ຊັດເຈນ.

8/- ໃຫ້ປັບປຸງຄືນບັນຊີລາຍການສິນຄ້າຄວບຄຸມ (ບັນຊີ ກ) ແລະ ບັນຊີລາຍການສິນຄ້າທົ່ວໄປ (ບັນຊີ ຂ) ໃຫ້ຄົບຖ້ວນ ແລະ ສອດຄ່ອງກັບສະພາບຕົວຈິງ; ສ້າງຖານຂໍ້ມູນ ລາຄາສິນຄ້າ ແລະ ຄ່າບໍລິການໃຫ້ເປັນລະບົບ ແຕ່ສູນກາງ ຮອດທ້ອງຖິ່ນ ເພື່ອໃຫ້ສາມາດວິໄຈ ແລະ ຄາດຄະເນລ່ວງໜ້າຕໍ່ການເໜັງຕີງຂອງລາຄາສິນຄ້າໃນແຕ່ລະໄລຍະ ເປັນຕົ້ນແມ່ນ ປະເພດສິນຄ້າທີ່ຈຳເປັນຕໍ່ການດຳລົງຊີວິດປະຈຳວັນ ຂອງປະຊາຊົນ ເພື່ອມີມາດຕະການແກ້ໄຂໃຫ້ທັນເວລາ.

9/- ໃຫ້ຄົ້ນຄວ້າພິຈາລະນາ ແລະ ປັບປຸງຄືນບາງລັດວິສາຫະກິດ ສະບຽງອາຫານຂອງແຂວງ, ນະຄອນຫຼວງທີ່ເຫັນວ່າມີເງື່ອນໄຂ ໃຫ້ມີຄວາມສາມາດສືບຕໍ່ດຳເນີນທຸລະກິດ, ສາມາດແຂ່ງຂັນ ກັບພາກສ່ວນທຸລະກິດອື່ນ ແລະ ມີຄວາມພ້ອມໃນການແຊກແຊງລາຄາໃນເວລາຈຳເປັນຕາມນະໂຍບາຍຂອງລັດຖະບານ.

10/- ໃຫ້ຮີບຮ້ອນຄົ້ນຄວ້າ ອອກນິຕິກຳ ແລະ ມາດຕະການ ເພື່ອຈັດຕັ້ງປະຕິບັດນະໂຍບາຍຕ່າງໆຂອງໂຄງການຜະລິດເຂົ້າ ເພື່ອຄ້ຳປະກັນດ້ານສະບຽງອາຫານ (13 ນະໂຍບາຍ) ແລະ ໂຄງການລ້ຽງສັດ ເພື່ອຄ້ຳປະກັນດ້ານສະບຽງອາຫານ ແລະ ເປັນສິນຄ້າ ( 8 ນະໂຍບາຍ) ຕາມມະຕິ ຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 016/ສພຊ, ລົງວັນທີ 24 ພະຈິກ 2016 ໃຫ້ເປັນຮູບປະທຳ.

11/- ໃຫ້ປຸກຈິດສຳນຶກ, ຊຸກຍູ້ສົ່ງເສີມ ໃຫ້ພົນລະເມືອງລາວທຸກເພດໄວ ຫັນມາທ່ອງທ່ຽວ ທາງດ້ານທຳມະຊາດ, ປະຫວັດສາດ, ວັດທະນາທຳຢູ່ພາຍໃນ ແລະ ນຳໃຊ້ຜະລິດຕະພັນ ແລະ ສິນຄ້າທີ່ຜະລິດໄດ້ພາຍໃນປະເທດໃຫ້ຫຼາຍຂຶ້ນ ເພື່ອຫຼຸດຜ່ອນການນຳເຂົ້າສິນຄ້າທີ່ບໍ່ຈຳເປັນ.

12/- ພາຍຫຼັງສ້າງແຜນງານ, ໂຄງການສຳເລັດແລ້ວ ໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ນຳສະເໜີເຂົ້າພິຈາລະນາ ໃນກອງປະຊຸມລັດຖະບານໂດຍໄວ ເພື່ອກະກຽມ ລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ໃນທ້າຍປີ 2017 ນີ້."

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຊາບ ແລະ ປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ດ້ວຍ.

ລັດຖະມົນຕີ,
ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ

ເພັດ ພົມພິພັກ

ບ່ອນນຳສົ່ງ:

| | |
|---|---|
| - ນາຍົກ-ຮອງນາຍົກ | 04 ສະບັບ |
| - ບັນດາກະຊວງ-ອົງການ | 01 ສະບັບ |
| - ນະຄອນຫຼວງວຽງຈັນ | 01 ສະບັບ |
| - ບັນດາແຂວງທົ່ວປະເທດ | 01 ສະບັບ |
| - ຄະນະ ຕສນຍ ທຳມະ | 01 ສະບັບ |
| - ກົມເລຂາ | 01 ສະບັບ |
| - ສຳເນົາ | 01 ສະບັບ |